

# ບົດສະຫຼຸບຫຍໍ້

## ການປະເມີນຜົນທ້າຍໂຄງການຂອງ BNC

ມັງກອນ 2019

# BEQUAL NGO CONSORTIUM
# FINAL EVALUATION EXECUTIVE SUMMARY

European Union

ChildFund Laos

Save the Children

World Vision

PLAN INTERNATIONAL

JANUARY 2019

# ການປະເມີນຜົນທ້າຍໂຄງການ ຂອງກຸ່ມຄູ່ຮ່ວມພັດທະນາທີ່ເປັນອົງການບໍ່ສັງກັດລັດຖະບານ ຂອງແຜນງານປັບປຸງຄຸນນະພາບ ແລະ ການຂະຫຍາຍໂອກາດການເຂົ້າເຖິງການສຶກສາຂັ້ນພື້ນຖານ (BEQUAL)

**BEQUAL NGO Consortium (BNC) Final Evaluation**

Executive Summary

## 1. <u>ບົດສະຫຼຸບຫຍໍ້</u>

ກຸ່ມຄູ່ຮ່ວມພັດທະນາທີ່ເປັນອົງການທີ່ບໍ່ສັງກັດລັດຖະບານຂອງແຜນງານ BEQUAL (BNC) ໄດ້ຖືກອອກແບບມາເພື່ອປະກອບສ່ວນເຂົ້າໃນການບັນລຸໝາກຜົນໃນຕອນທ້າຍຂອງແຜນງານ (EOPO) ການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (BEQUAL) ໃນດ້ານການເຂົ້າເຖິງ ແລະ ການມີສ່ວນຮ່ວມ: *ມີເດັກນ້ອຍ ແລະ ໄວໜຸ່ມທີ່ດ້ອຍໂອກາດດ້ານການສຶກສາລົງ ທະບຽນເຂົ້າຮຽນ ແລະ ໄປໂຮງຮຽນຢ່າງເປັນປົກກະຕິຫຼາຍຂຶ້ນ ໃນການສຶກສາຂັ້ນພື້ນຖານ.* BNC ແມ່ນກຸ່ມຂອງສີ່ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs) (ເຊິ່ງລວມມີອົງການຊາຍພັນ, ອົງການແພລນ ສາກົນ, ອົງການຊ່ວຍເຫຼືອເດັກສາກົນ ແລະ ອົງການສຸພານິມິດ) ແລະ ເປັນກຸ່ມທີ່ໄດ້ຮັບສັນຍາຍ່ອຍຈາກຜູ້ຮັບເໝົາບໍລິຫານແຜນງານບີຄວາ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກໍາຕ່າງໆ ທີ່ໄດ້ຖືກສ້າງຂຶ້ນໂດຍການປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ແລະ ກົມການຕ່າງປະເທດ ແລະ ການຄ້າ ອົດສະຕາລີ (DFAT). ຈຸດປະສົງຂອງກຸ່ມ BNC ແມ່ນເພື່ອຕື່ມເຕັມວຽກງານໃນດ້ານອື່ນໆ ຂອງແຜນງານບີຄວາ ແລະ ເພື່ອໃຫ້ການສະໜັບສະໜູນໂດຍກົງແກ່ວຽກງານດ້ານການເຂົ້າຮຽນໂດຍລວມຂອງ ກະຊວງສຶກສາທິການ ແລະ ກິລາ. ກຸ່ມ BNC ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດ ໃນຕົ້ນປີ 2016 ແລະ ຈະສິ້ນສຸດໃນທ້າຍປີ 2018.

ຈຸດປະສົງຂອງ BNC:

ຈຸດປະສົງ ທີ 1: ເພື່ອສົ່ງເສີມການເຂົ້າເຖິງ ແລະ ການເຂົ້າຮຽນ ຂອງເດັກນ້ອຍທີ່ດ້ອຍໂອກາດດ້ານພາສາ, ຄວາມສະເໝີພາບທາງເພດ, ເດັກພິການ ແລະ ເດັກຊົນເຜົ່າ ໃນໂຮງຮຽນຕ່າງໆ ໂດຍຜ່ານ ການຍົກລະດັບທັກສະການເວົ້າ ພາສາລາວ ແລະ ການສົ່ງເສີມການອ່ານຂອງເດັກນ້ອຍໃນຊັ້ນປະຖົມສຶກສາຕອນຕົ້ນ.

ຈຸດປະສົງ ທີ 2: ເພື່ອເສີມສ້າງກົນໄກຂອງຊຸມຊົນ ເພື່ອສ້າງສະພາບແວດລ້ອມທີ່ສົ່ງເສີມການຮຽນທີ່ດີ ໃນເຮືອນ ແລະ ຊຸມຊົນຂອງເດັກນ້ອຍດ້ອຍໂອກາດ.

ຈຸດປະສົງ ທີ 3: ໂຮງຮຽນເປົ້າໝາຍ 171 ແຫ່ງ ນໍາໃຊ້ການປະຕິບັດສຸຂະອະນາໄມທີ່ດີ

ການສຶກສາຂໍ້ມູນທຽບຖານສໍາລັບກິດຈະກໍາສົ່ງເສີມວຽກງານການສຶກສາຂອງ BNC ໄດ້ຖືກດໍາເນີນງານ ໃນເດືອນ ກໍລະກົດ ຫາເດືອນ ສິງຫາ 2016 ແລະ ການປະເມີນຜົນທ້າຍໂຄງການຂອງບັນດາກິດຈະກໍາ ດັ່ງກ່າວນີ້ໄດ້ກວມເອົາໄລຍະຂອງການຈັດຕັ້ງປະຕິບັດຕັ້ງແຕ່ ເດືອນ ເມສາ 2016 ເຖິງ ເດືອນ ກັນຍາ 2018, ເຊິ່ງເປັນໄລຍະປະມານສອງສົກຮຽນ. ການປະເມີນຜົນທ້າຍໂຄງການນີ້ ແມ່ນການຕີລາຄາ ຜົນ ໄດ້ຮັບຂອງ BNC ໃນຫ້າຂົງເຂດຄື: ຄວາມກ່ຽວຂ້ອງ, ຄວາມມີປະສິດທິພາບ, ຄວາມມີປະສິດທິຜົນ, ຜົນ ກະທົບ ແລະ ຄວາມຍືນຍົງ. ການເກັບກໍາຂໍ້ມູນໃນ 28 ບ້ານ ໃນເຈັດຕົວເມືອງ ໄດ້ຖືກດໍາເນີນການ ຕັ້ງແຕ່ ວັນທີ 17 ຕຸລາ ເຖິງ ວັນທີ 5 ພະຈິກ 2018. ຈໍານວນຜູ້ເຂົ້າຮ່ວມໃນການປະເມີນຜົນທັງໝົດ ແມ່ນ 1.404 ຄົນ, ເປັນຍິງ 48% (676 ຄົນ).

## ຜົນຂອງການສໍາຫຼວດ

## ຄວາມກ່ຽວຂ້ອງ

ຈຸດປະສົງຂອງ BNC ມີຄວາມສອດຄ່ອງກັບໝາກຜົນຂອງແຜນງານບີຄວາໃນດ້ານການສົ່ງເສີມການ ມີສ່ວນຮ່ວມ: *ມີເດັກຍິງ ແລະ ຊາຍ ຫຼາຍຂຶ້ນ, ໂດຍສະເພາະຜູ້ທີ່ດ້ອຍໂອກາດ, ເຂົ້າຮ່ວມໃນການສຶກສາ ຂັ້ນພື້ນຖານ.* BNC ໄດ້ຖືກອອກແບບມາເພື່ອສົ່ງເສີມວຽກງານຂອງແຜນງານບີຄວາ ໃນການປັບປຸງ ຄຸນນະພາບຂອງການສິດສອນ ເຊິ່ງສຸມໃສ່ ການປ່ຽນແປງ ໃນຄຸນນະພາບຂອງການສິດສອນ, ການ ພັດທະນາຄູ ແລະ ລະບົບການສະໜັບສະໜູນຕ່າງໆ. ບັນດາຈຸດປະສົງຂອງ BNC ແລະ ການຊ່ວຍເຫຼືອ ໃນລະດັບຊຸມຊົນ ມີຄວາມເຊື່ອມໂຍງກັນຢ່າງຈະແຈ້ງກັບການອອກແບບຂອງແຜນງານບີຄວາ ທີ່ ແນໃສ່ສົ່ງເສີມການມີສ່ວນຮ່ວມຂອງເດັກຍິງ ແລະ  ເດັກຊາຍະ ຜູ້ທີ່ດ້ອຍໂອກາດໃນການສຶກສາຂັ້ນ ປະຖົມ.

## ຄວາມມີປະສິດທິພາບ

ນັບຕັ້ງແຕ່ ປີ 2016, ໄດ້ມີການຫຼຸດລົງຂອງໄລຍະການຂາດຮຽນທັງໃນນັກຮຽນຍິງ ແລະ ນັກຮຽນຊາຍ ໃນສົກຮຽນສຸດທ້າຍ. ແລະ ຍັງເຫັນວ່າ ໄດ້ມີການຫຼຸດລົງຂອງໄລຍະການຂາດຮຽນຂອງ ບັນດານັກຮຽນຢູ່ ໃນທຸກຕົວເມືອງເມື່ອສົມທຽບໃສ່ຂໍ້ມູນທຽບຖານ.

ນັກຮຽນມີປະສົບການທີ່ດີຂຶ້ນໃນການຮຽນພາສາລາວ ເນື່ອງຈາກວ່າບັນດາຄູໄດ້ນໍາໃຊ້ການແນະນໍາ ແລະ ເຕັກນິກໃນການສິດສອນ ທີ່ດີຂຶ້ນກວ່າເກົ່າ. ອັດຕາສ່ວນຂອງນັກຮຽນທີ່ເຂົ້າໃຈການແນະນໍາເປັນ ພາສາລາວຂອງຄູຂອງພວກເຂົາ “ສ່ວນຫຼາຍ” ແມ່ນເພີ່ມຂຶ້ນ ຈາກ 21% (2016) ເປັນ 40% (2018). ນັກຮຽນສ່ວນຫຼາຍສາມາດນໍາໃຊ້ພາສາລາວ ໃນການສົນທະນາໂຕ້ຕອບກັບນາຍຄູຂອງພວກເຂົາ. ຕົວຢ່າງ, ໃນການສໍາຫຼວດ ປີ 2016, 57% ຂອງນັກຮຽນໄດ້ບອກວ່າ ພວກເຂົາສາມາດ ຕອບຄໍາຖາມ

ຂອງຄູຂອງພວກເຂົາເປັນພາສາລາວໄດ້, ອັດຕາສ່ວນດັ່ງກ່າວນີ້ໄດ້ເພີ່ມຂຶ້ນເປັນ 69% ຂອງຈໍານວນນັກຮຽນໃນການສໍາຫຼວດ ປີ 2018.

ໂຮງຮຽນໄດ້ສະໜອງໂອກາດໃນການອ່ານ. ນັກຮຽນສ່ວນຫຼາຍອ່ານປຶ້ມເລື່ອງໃນໂຮງຮຽນ. ການສໍາຫຼວດພົບວ່າເດັກຍິງ (87%, n=371) ອ່ານໃນໂຮງຮຽນຫຼາຍກວ່າເດັກຊາຍ (84%, n= 357). ຜົນການສໍາຫຼວດນີ້ ສະແດງໃຫ້ເຫັນວ່າ ຄູ, ຜູ້ປົກຄອງ, ສະມາຊິກຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອາສາສະໝັກ ມີຄວາມທ້າວທັນໃນການຊຸກຍູ້ໂອກາດ ໃນການອ່ານ ທີ່ເທົ່າທຽມກັນສໍາລັບທັງເດັກຍິງ ແລະ ເດັກຊາຍ.

ນັກຮຽນອ່ານຫຼາຍຂຶ້ນຢູ່ເຮືອນຂອງເຂົາເຈົ້າ. ຂໍ້ມູນທຽບຖານກ່ຽວກັບອັດຕາສ່ວນຂອງເດັກນ້ອຍທີ່ມີປຶ້ມເລື່ອງຢູ່ເຮືອນ ແມ່ນ 64% (2016) ແລະ ອັດຕາສ່ວນນີ້ໄດ້ເພີ່ມຂຶ້ນເປັນ 98% ໃນປີ 2018. ນອກຈາກນັ້ນ, ອັດຕາສ່ວນທີ່ນັກຮຽນລາຍງານວ່າພວກເຂົາໄດ້ໃຊ້ເວລາຮຽນຢູ່ບ້ານ 3-4 ມື້ຕໍ່ອາທິດນັ້ນກໍ່ໄດ້ເພີ່ມຂຶ້ນເຊັ່ນກັນ ຈາກ 26 % (2016) ເປັນ 34% (2018). ຈໍານວນນັກຮຽນທີ່ໄດ້ອ່ານປຶ້ມຢູ່ບ້ານຫ້າມື້ຕໍ່ອາທິດ ຢູ່ໃນເມືອງຮຸນ (35%), ເມືອງນໍ້າບາກ (26%) ແລະ ເມືອງຊໍາເໜືອ (26%) ແມ່ນມີຫຼາຍກວ່າຢູ່ເມືອງອື່ນໆ.

ຄະນະພັດທະນາການສຶກສາຂັ້ນບ້ານ ສ່ວນຫຼາຍ ໄດ້ນໍາໃຊ້ເງິນຊ່ວຍເຫຼືອຈໍານວນໜ້ອຍໜຶ່ງເຂົ້າໃນການສະໜັບສະໜູນການຮຽນຮູ້ ແລະ ການອ່ານ (65%) ຢູ່ໃນໂຮງຮຽນ ສໍາລັບອຸປະກອນຫຼາຍປະເພດເພື່ອການຫຼິ້ນດົນຕີ, ຫຼິ້ນກິລາ, ຫັດຖະກໍາ, ການຂຽນ ແລະ ການອ່ານ ຂອງເດັກຍິງ, ເດັກຊາຍ, ເດັກຊົນເຜົ່າທີ່ທຸກຍາກ ແລະ ເດັກພິການ.

ບ້ານເປົ້າໝາຍສ່ວນໃຫຍ່ໃນ BNC ໄດ້ປັບປຸງສິ່ງອໍານວຍຄວາມສະດວກດ້ານນໍ້າສະອາດ ສຸຂະອະນາໄມ ແລະ ສຸຂາພິບານ ໃນໂຮງຮຽນ ໂດຍການຕິດຕັ້ງບ່ອນລ້າງມື, ສະໜອງເຄື່ອງໃຊ້ສຸຂະອະນາໄມ ແລະ ຈັດກິດຈະກໍາຕ່າງໆໃນໂຮງຮຽນ. ຄວາມຄືບໜ້າໄປສູ່ການປ່ຽນແປງພຶດຕິກໍາ ໃນການລ້າງມື ແລະ ການຖູແຂ້ວ ຢ່າງເປັນປົກກະຕິ ຢູ່ໃນໂຮງຮຽນແມ່ນເພີ່ມຂຶ້ນ. ນັກຮຽນຫຼາຍຄົນທີ່ເຂົ້າຮ່ວມໃນການປະເມີນຜົນຄັ້ງນີ້ ຈົດຈໍາໄດ້ວ່າພວກເຂົາຄວນນໍາໃຊ້ສະບູ່ ແລະ ນໍ້າ (92%) ເພື່ອລ້າງມືຂອງພວກເຂົາ. ນັກຮຽນບໍ່ໄດ້ຮັບຂໍ້ຄວາມກ່ຽວກັບການປະຕິບັດດ້ານສຸຂະອະນາໄມທີ່ສອດຄ່ອງເປັນປະຈໍາ. 61% (n = 520) ຂອງນັກຮຽນບອກວ່າ ພວກເຂົາໄດ້ລ້າງມື ແລະ 44% (n = 377) ຂອງນັກຮຽນໄດ້ຖູແຂ້ວ ໃນມື້ກ່ອນໜ້າ ທີ່ທີມງານປະເມີນຜົນ ໄດ້ລົງໄປຢ້ຽມຢາມພວກເຂົາ. ເຫດຜົນແມ່ນ ໃນບາງໂຮງຮຽນ (37 ໃນ 171 ໂຮງຮຽນ) ມີບັນຫາກ່ຽວກັບການມີນໍ້າໃຊ້, ຄວາມຫຼ້າຊ້າໃນການຈັດສົ່ງວັດສະດຸ ແລະ ອຸປະກອນ ນໍ້າສະອາດ ສຸຂະອະນາໄມ ແລະ ສຸຂາພິບານ ແລະ ການປະຕິບັດ ແລະ ການສົ່ງຂໍ້ຄວາມກ່ຽວກັບ ນໍ້າສະອາດ ສຸຂະອະນາໄມ ແລະ ສຸຂາພິບານ ຢູ່ໃນໂຮງຮຽນ ແລະ ໃນຊຸມຊົນ ທີ່ບໍ່ສະໝໍ່າສະເໝີ.

## ປະສິດທິຜົນ

ການໃຊ້ຈ່າຍຂອງ BNC ແມ່ນຄາດວ່າຈະຕ່ຳກວ່າງົບປະມານ ປະມານ 1%. ການວິເຄາະປະສິດທິຜົນຂອງມູນຄ່າພື້ນຖານຂອງການໃຊ້ຈ່າຍຈົນເຖິງປະຈຸບັນ ແລະ ຜົນປະໂຫຍດທີ່ຖືກແບ່ງປັນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການສຳລັບໄລຍະຕັ້ງແຕ່ ເດືອນ ເມສາ 2016 ຈົນເຖິງ ເດືອນ ກັນຍາ 2018 ສະແດງໃຫ້ເຫັນວ່າ 283 ໂດລາອົດສະຕາລີ ທີ່ຖືກໃຊ້ຈ່າຍສຳລັບຊຸມຊົນ ຜູ້ໄດ້ຮັບຜົນປະໂຫຍດ. ໄປເຖິງຜູ້ໄດ້ຮັບຜົນປະໂຫຍດຈຳນວນທັງໝົດ 20.757 ຄົນ (ເປັນເດັກນ້ອຍ 15.120 ຄົນ, ຄູ 178 ຄົນ, ອາສາສະໝັກ 612 ຄົນ, ສະມາຊິກຄະນະກຳມະການການສຶກສາຂັ້ນບ້ານ 1.521 ຄົນ ແລະ ຜູ້ປົກຄອງ/ຜູ້ດູແລ 3.326 ຄົນ). ໃນບັນດາກຸ່ມຄົນຕ່າງໆເຫຼົ່ານີ້, 49% ແມ່ນຜູ້ໄດ້ຮັບຜົນປະໂຫຍດເພດຍິງ ແລະ 91 ຄົນແມ່ນເດັກນ້ອຍທີ່ມີຄວາມພິການ.

ການໃຊ້ຈ່າຍຂອງ BNC ຍັງໄດ້ປະກອບສ່ວນເຂົ້າໃນການຈ້າງງານພະນັກງານທ້ອງຖິ່ນຈຳນວນ 54 ຄົນ ເຊິ່ງແມ່ນ 82% ຂອງບຸກຄະລາກອນທັງໝົດຂອງ BNC. ຈຳນວນບຸກຄະລາກອນທີ່ຖືກຈັດສັນໃຫ້ຈັດຕັ້ງປະຕິບັດກິດຈະກຳຕ່າງໆ ແມ່ນສອດຄ່ອງກັບຄວາມຕັ້ງໃຈໃຫ້ເກີດມີການປ່ຽນແປງພຶດຕະກຳໃນຊຸມຊົນທີ່ດ້ອຍໂອກາດ.

## ຜົນກະທົບ

ການເອົາໃຈໃສ່ໃນການຮຽນຮູ້ໃນຊັ້ນປະຖົມສຶກສາຕອນຕົ້ນຂອງ BNC ໄດ້ຊ່ວຍໃຫ້ບັນດາຄູມີເຄື່ອງມືປະຕິບັດຕົວຈິງ ແລະ ທັກສະ ໃນການສິດສອນ ເພື່ອກຽມຄວາມພ້ອມກ່ອນການເຂົ້າຮຽນ ທີ່ນຳໃຊ້ພາສາລາວ. ໃນຄູຈຳນວນ 85 ຄົນທີ່ເຂົ້າຮ່ວມໃນການປະເມີນຜົນຄັ້ງນີ້, 36 ຄົນ (42%) ທີ່ໄດ້ຮັບການເຝິກອົບຮົມກ່ຽວກັບ ການສອນພາສາລາວໃຫ້ເດັກຊົນເຜົ່າ ໄດ້ລາຍງານວ່າພວກເຂົາເຫັນວ່າເນື້ອໃນ ແລະ ເຕັກນິກເປັນປະໂຫຍດ ຕໍ່ການສອນຂອງເຂົາເຈົ້າ. ຄູຕ້ອງການການສະໜັບສະໜູນຫຼາຍຂຶ້ນກ່ຽວກັບການສອນພາສາລາວ, ໂດຍສະເພາະໃນເມືອງ ນ້ຳບາກ, ຮຸນ ແລະ ຫົວເມືອງ. ໃນຄູຈຳນວນ 36 ຄົນທີ່ໄດ້ຮັບການເຝິກອົບຮົມໃນ ການສອນພາສາລາວໃຫ້ເດັກຊົນເຜົ່າ, 25% ຕ້ອງການໃຫ້ມີການເພີ່ມຕື່ມອຸປະກອນການຮຽນຮູ້ໃຫ້ໃໝ່ຢ່າງເປັນປົກກະຕິໃນປີທີສອງ; 33% ໄດ້ລາຍງານວ່າພວກເຂົາ ຕ້ອງການການເຝິກອົບຮົມເພື່ອທວນຄືນບົດຮຽນ ຫຼື ການເຝິກອົບຮົມໃຫ້ແກ່ຄູຜູ້ອື່ນໃນໂຮງຮຽນ; ແລະ 25% ຕ້ອງການການແນະນຳຊຸກຍູ້ ຫຼາຍຂຶ້ນພາຍຫຼັງຈາກການເຝິກອົບຮົມຈາກພະນັກງານ ຫ້ອງການສຶກສາ ແລະ ກິລາເມືອງ ແລະ BNC.

ກິດຈະກຳການອ່ານຂອງ BNC ໄດ້ສ້າງຄວາມຕ້ອງການໃນການອ່ານ ແລະ ຄວາມຕ້ອງການປຶ້ມຂອງເດັກນ້ອຍ. ໃນການປະເມີນຜົນຄັ້ງນີ້, 92% ຂອງນັກຮຽນຈະເຂົ້າຮ່ວມກິດຈະກຳການອ່ານຫຼາຍຂຶ້ນໃນອະນາຄົດ ແລະ 96% ຂອງນັກຮຽນຈະສືບຕໍ່ອ່ານຖ້າມີປຶ້ມໃຫ້ອ່ານໃນຊຸມຊົນ.

ອາສາສະໝັກບ້ານໄດ້ປູກຈິດສຳນຶກຢ່າງມີປະສິດທິພາບ ກ່ຽວກັບການອ່ານໃນບັນດາສະມາຊິກຊຸມຊົນ ແລະ ໄດ້ເພີ່ມການມີສ່ວນຮ່ວມຂອງເດັກນ້ອຍ ເຂົ້າໃນການອ່ານຢູ່ນອກໂຮງຮຽນຫຼາຍຂຶ້ນ. ຄວາມເປັນເຈົ້າການຂອງຊຸມຊົນ ຕໍ່ການແກ້ໄຂ ແລະ ຜົນໄດ້ຮັບໃນກໍລະນີນີ້ ແມ່ນອີງໃສ່ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອາສາສະໝັກທີ່ມີແຮງບັນດານໃຈ. ເພື່ອຮັບປະກັນວ່າວຽກງານມີການສືບຕໍ່ພາຍຫຼັງ BNC, ຍຸດທະສາດການສ້າງຄວາມເປັນເຈົ້າການຂອງຊຸມຊົນຕໍ່ກັບການສົ່ງເສີມການອ່ານຄວນຖືກຮວບຮວມເຂົ້າໃນການອອກແບບແຜນງານສຳລັບການສ້າງຄວາມອາດສາມາດຂອງອາສາສະໝັກ, ຄະນະພັດທະນາການສຶກສາຂັ້ນບ້ານ, ຄູ ແລະ ຜູ້ປົກຄອງ.

ມີຄວາມຫຼ້າຊ້າໃນການຕິດຕັ້ງບ່ອນລ້າງມື ແລະ ການແຈກຢາຍອຸປະກອນດ້ານສຸຂະອະນາໄມ ເນື່ອງຈາກບັນຫາ ການມີນ້ຳໃຊ້ ໃນໝູ່ບ້ານ ຫຼື ໂຮງຮຽນ; ບັນຫາດ້ານການຈັດຊື້ ແລະ ການຈັດສົ່ງ. ໂຮງຮຽນ 134 (78%) ແຫ່ງຈາກ ທັງໝົດ 171 ແຫ່ງ ມີບ່ອນລ້າງມືທີ່ໃຊ້ງານໄດ້ດີ. ການຂາດການຕິດຕາມທີ່ເປັນລະບົບຂອງວຽກງານນີ້ ໄດ້ສົ່ງຜົນກະທົບຕໍ່ການປ່ຽນແປງພຶດຕິກຳດ້ານສຸຂະອະນາໄມໃນໂຮງຮຽນ.

BNC ໄດ້ປູກຈິດສຳນຶກໃນບັນດາ ຄູ, ຜູ້ປົກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານ, ເດັກນ້ອຍ ແລະ ຫ້ອງການສຶກສາ ແລະ ກິລາເມືອງ ກ່ຽວກັບເດັກນ້ອຍທີ່ມີຄວາມພິການ ແລະ ສິດທິໃນການເຂົ້າຮຽນ ແລະ ການຮຽນຮູ້ຂອງພວກເຂົາ. ເປົ້າໝາຍນີ້ບັນລຸໄດ້ໂດຍການຍົກສູງຂໍ້ຄວາມຕ່າງໆ ກ່ຽວກັບການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ໃນເນື້ອໃນຂອງການເຝິກອົບຮົມສຳລັບການສົ່ງເສີມການອ່ານໃນຫ້ອງຮຽນ ແລະ ໃນຊຸມຊົນ, ໃນກອງທຶນຂະໜາດນ້ອຍຂອງ ນ້ຳສະອາດ ສຸຂະອະນາໄມ ແລະ ສຸຂາພິບານ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ. ເດັກນ້ອຍທີ່ມີບັນຫາທີ່ຊັບຊ້ອນ ແລະ ຕ້ອງການການຊ່ວຍເຫຼືອ ແລະ ການເບິ່ງແຍງເປັນພິເສດ ຕ້ອງໄດ້ຮັບການຊ່ວຍເຫຼືອທີ່ຈິງຈັງ ແລະ ເປັນແບບແຜນ ໃນໂຮງຮຽນ ແລະ ເຮືອນ. ມີຄວາມຈຳເປັນໃນການປຶກສາຫາລື ແລະ ຮັບຟັງຄຳຄິດເຫັນຂອງເດັກນ້ອຍທີ່ມີຄວາມພິການ ແລະ ຜູ້ປົກຄອງຂອງພວກເຂົາ ເພື່ອຮັບປະກັນວ່າການຊ່ວຍເຫຼືອທີ່ເໝາະສົມ ແລະ ຍືນຍົງ ພາຍຫຼັງ ແຜນງານຈົບລົງ.

ການຍົກສູງບົດບາດຍິງຊາຍໃນ BNC ໄດ້ເນັ້ນໜັກໃຫ້ມີການມີສ່ວນຮ່ວມຢ່າງເທົ່າທຽມກັນຂອງທັງເພດຍິງ ແລະ ເພດຊາຍ ເຊິ່ງເປັນບາດກ້າວເລີ່ມຕົ້ນໄປສູ່ຄວາມສະເໝີພາບ. BNC ໄດ້ຮັບປະກັນວ່າບັນດາກິດຈະກຳຂອງພວກເຂົາຄຳນຶງເຖິງບັນຫາ ບົດບາດຍິງຊາຍ ແລະ ຂໍ້ຄວາມທີ່ສອດຄ່ອງກັບການມີສ່ວນຮ່ວມຢ່າງເທົ່າທຽມກັນ ໄດ້ຖືກນຳໃຊ້ໂດຍ ຫ້ອງການສຶກສາ ແລະກິລາເມືອງ, ຄະນະພັດທະນາການສຶກສາຂັ້ນບ້ານ, ຄູ ແລະ ຜູ້ປົກຄອງ. ຂໍ້ມູນຈາກການຕິດຕາມ ໄດ້ສະແດງໃຫ້ເຫັນວ່າການຂະຫຍາຍໂອກາດເຂົ້າຮຽນທີ່ເທົ່າທຽມກັນ ແມ່ນມີປະສິດທິພາບ. ການຂາດເປົ້າໝາຍທີ່ຈະແຈ້ງ ກ່ຽວກັບວຽກງານຄວາມເໝີພາບບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ໃນລະດັບຊຸມຊົນ ແລະ ໂຮງຮຽນ ໄດ້ເຮັດໃຫ້ສຸມໃສ່ສະເພາະແຕ່ຜົນໄດ້ຮັບພຽງຢ່າງດຽວ ແລະ ມີການປ່ຽນແປງຕາມທີ່ຄາດໄວ້ໃນລະດັບບຸກຄົນ ແລະ ຊຸມຊົນທີ່ຈຳກັດ.

**ຄວາມຍືນຍົງ**

ກິດຈະກຳສົ່ງເສີມການຮູ້ໜັງສື ແລະ ການອ່ານທີ່ຊຸມຊົນເປັນເຈົ້າການ ຂອງ BNC ໄດ້ສະແດງໃຫ້ເຫັນວ່າ ເດັກນ້ອຍມີສ່ວນຮ່ວມຫຼາຍຂຶ້ນໃນການອ່ານ ແລະ ມີຄວາມຕ້ອງການດ້ານອຸປະກອນຕ່າງໆເພີ່ມຂຶ້ນ. ໃນກໍລະນີທີ່ບັນດາຄູ, ຜູ້ປົກຄອງ ແລະ ນັກຮຽນ ມີລະດັບການອ່ານທີ່ຕໍ່າ, ກິດຈະກຳສົ່ງເສີມການຮູ້ໜັງສື ແລະ ການອ່ານໃນຊຸມຊົນ ໄດ້ກາຍເປັນກົນໄກອັນໜຶ່ງ ທີ່ຊ່ວຍໃຫ້ການຮຽນຮູ້ພາຍໃນຫ້ອງຮຽນສາມາດຂະຫຍາຍອອກນອກໂມງຮຽນໄດ້. ຄວາມສຳເລັດດັ່ງກ່າວນີ້ ເປັນສ່ວນໜຶ່ງທີ່ເຮັດໃຫ້ ຫ້ອງການສຶກສາ ແລະ ກິລາເມືອງ ຂອງເມືອງຮຸນ ແລະ ພະແນກສຶກສາ ແລະ ກິລາແຂວງ ຄຳມ່ວນ ສະໜັບສະໜູນໃຫ້ບັນດາຄູໃນຂົງເຂດນີ້ ນຳໃຊ້ອຸປະກອນ ການສອນພາສາລາວໃຫ້ເດັກຊົນເຜົ່າ ພາຍຫຼັງແຜນງານ BNC. ການຂະຫຍາຍຕົວໃຫ້ກວດລວມເອົາຂົງເຂດທີ່ກວ້າງອອກ ເພື່ອສົ່ງເສີມ ການສິດສອນພາສາລາວ ແມ່ນກຳລັງເກີດຂຶ້ນໃນບາງ ຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະແນກສຶກສາ ແລະ ກິລາແຂວງ ທີ່ຖືກຄັດເລືອກໄວ້. ການຮ່ວມມືອັນໃກ້ຊິດກັບອົງກອນໃນສາຍງານດັ່ງກ່າວນີ້ ໄດ້ສົ່ງເສີມຄວາມເປັນເຈົ້າການຂອງຊຸມຊົນໃນທ້ອງຖິ່ນ ໃນດ້ານການສິດສອນພາສາລາວ.

ກິດຈະກຳ ນ້ຳສະອາດ ສຸຂະອະນາໄມ ແລະ ສຸຂະພິບານ ໄດ້ຮັບການສະໜັບສະໜູນຈາກລັດຖະບານເພື່ອໃຫ້ ສອດຄ່ອງກັບເປົ້າໝາຍຂອງ ພະແນກສຶກສາ ແລະ ກິລາແຂວງ ຮ່ວມກັບ ຫ້ອງການສຶກສາ ແລະ ກິລາເມືອງ. ການຂະຫຍາຍວຽກງານໃຫ້ກວມລວມເອົາພື້ນທີ່ອື່ນໆ ແມ່ນມີຄວາມເປັນໄປໄດ້, ແຕ່ວ່າອົງປະກອບດ້ານ ນ້ຳສະອາດ ສຸຂະອະນາໄມ  ແລະ ສຸຂາພິບານ ຈຳເປັນຕ້ອງຖືກເຮັດໃຫ້ເຂັ້ມແຂງຍິ່ງຂຶ້ນເພື່ອໃຫ້ມີຜົນກະທົບ. ເຊັ່ນ, ໂຄງລ່າງພື້ນຖານດ້ານ ນ້ຳ ສຸຂະອະນາໄມ ແລະ ສຸຂາພິບານ ຖືກອອກແບບເພື່ອໃຫ້ເໝາະສົມກັບການນຳໃຊ້ໃນທ້ອງຖິ່ນໂດຍຜູ້ໄດ້ຮັບຜົນປະໂຫຍດ; ຍຸດທະສາດເພື່ອແກ້ໄຂບັນຫາການເຂົ້າເຖິງນ້ຳ ແລະ ການສະໜອງນ້ຳ; ແລະ ກິດຈະກຳຊ່ວຍເຫຼືອເພື່ອໃຫ້ມີການປ່ຽນແປງພຶດຕິກຳ.

ຄະນະພັດທະນາການສຶກສາຂັ້ນບ້ານ ແມ່ນກົນໄກອັນໜຶ່ງສຳລັບການມີສ່ວນຮ່ວມຂອງທ້ອງຖິ່ນ. ຄະນະພັດທະນາການສຶກສາຂັ້ນບ້ານ ແມ່ນຕົວເຊື່ອມຕໍ່ລະຫວ່າງ ໂຮງຮຽນ, ຊຸມຊົນເຊິ່ງໂດຍທົ່ວໄປແມ່ນເຮັດໜ້າທີ່ໃນການຄຸ້ມຄອງ, ບໍລິຫານ ແລະ ຕິດຕາມການພັດທະນາ ແລະ ການວາງແຜນຂອງໂຮງຮຽນ. ຄະນະພັດທະນາການສຶກສາຂັ້ນບ້ານ ທີ່ເຮັດໜ້າທີ່ໄດ້ເປັນຢ່າງດີ ໃນ BNC ໄດ້ສະແດງໃຫ້ເຫັນວ່າ ຂອບເຂດຂອງບົດບາດຂອງພວກເຂົາ ກວມລວມເອົາການສົ່ງເສີມການອ່ານ, ການຮຽນຮູ້ ແລະ ການປະຕິບັດດ້ານສຸຂະອະນາໄມ ໃນຊຸມຊົນ. ກອງທຶນຊ່ວຍເຫຼືອຂະໜາດນ້ອຍຂອງ ຄະນະພັດທະນາການສຶກສາຂັ້ນບ້ານ, ໂດຍລວມແລ້ວ, ໄດ້ສະແດງໃຫ້ເຫັນວ່າ ຄະນະພັດທະນາການສຶກສາຂັ້ນບ້ານ ສາມາດຖືກຊຸກຍູ້ ໃຫ້ສະໜັບສະໜູນການຮຽນຮູ້; ການສ້າງຄວາມສະເໝີພາບບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງຄົນພິການ. ການເນັ້ນໜັກທີ່ຫຼາຍຂຶ້ນໃສ່ການວາງແຜນຊຸມຊົນ ໃນລະຫວ່າງການຈັດຕັ້ງ

ປະຕິບັດ ສຳລັບກິດຈະກຳທີ່ຕໍ່ເນື່ອງ ແລະ ຜົນໄດ້ຮັບພາຍຫຼັງ BNC ສິ້ນສຸດລົງ ຈະສ້າງຄວາມເຂັ້ມແຂງໃຫ້ແກ່ການລົງທຶນໃນກົນໄກ ຄະນະພັດທະນາການສຶກສາຂັ້ນບ້ານ.

ສັນຍາການຮ່ວມມືຂອງ BNC ໄດ້ສົ່ງເສີມໃຫ້ມີຜົນໄດ້ຮັບທີ່ດີຂຶ້ນ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ ໂດຍຜ່ານການນຳໃຊ້ຊັບພະຍາກອນຮ່ວມກັນ. ການເຂົ້າເຖິງຜູ້ຊ່ຽວຊານດ້ານເຕັກນິກທີ່ມີຢູ່ໃນບັນດາອົງການ ຢ່າງມີປະສິດທິຜົນ ໂດຍບັນດາຄູ່ຮ່ວມງານຂອງ BNC ແມ່ນເປັນໄປໄດ້ ເນື່ອງມາຈາກສາຍພົວພັນລະຫວ່າງບັນດາອົງການທີ່ເປັນສະມາຊິກຂອງກຸ່ມຄູ່ຮ່ວມພັດທະນາ. ການຮຽນຮູ້ ແລະ ການແລກປ່ຽນຊັບພະຍາກອນລະຫວ່າງອົງການພາຍໃນ BNC ເກີດຂຶ້ນຢ່າງມີປະສິດທິຜົນ. ສັນຍາການຮ່ວມມື, ຫຼື ກົນໄກທີ່ຄ້າຍຄືກັນ, ມີຄວາມສຳຄັນໃນການປະສານງານຮ່ວມມືຢ່າງມີປະສິດທິພາບລະຫວ່າງຫຼາຍອົງການ ທີ່ມີຂະໜາດ, ຄວາມອາດສາມາດ ແລະ ຄວາມຊຳນິຊຳນານທີ່ແຕກຕ່າງກັນ.

**ການຖອດຖອນບົດຮຽນ ແລະ ຂໍ້ສະເໜີ**

**ການມີສ່ວນຮ່ວມ**

**ບົດຮຽນທີ່ຖອດຖອນໄດ້**: ວຽກງານການສົ່ງເສີມການອ່ານ ແລະ ການຮູ້ໜັງສືທີ່ຊຸມຊົນເປັນເຈົ້າການຂອງ BNC ໄດ້ສ້າງໃຫ້ມີການມີສ່ວນຮ່ວມໃນທາງບວກ ແລະ ໄດ້ສະແດງໃຫ້ເຫັນເຖິງການມີສ່ວນຮ່ວມທີ່ຫຼາຍຂຶ້ນຂອງເດັກນ້ອຍ ໃນດ້ານການອ່ານ ແລະ ຄວາມຕ້ອງການໃນການຮຽນຮູ້. ກິດຈະກຳເຫຼົ່ານີ້ແມ່ນມີປະສິດທິພາບໃນການສະໜັບສະໜູນການຮຽນຮູ້ໃນຫ້ອງຮຽນນອກໂມງເຂົ້າຮຽນ. BNC ໄດ້ສະແດງໃຫ້ເຫັນວ່າ ການໄດ້ນຳໃຊ້ອຸປະກອນການອ່ານ ແລະ ການຮ່ວມກິດຈະກຳການອ່ານທີ່ກ່ຽວຂ້ອງຊ້ຳໄປຊ້ຳມາເລື້ອຍໆ ສາມາດເຮັດໃຫ້ ຄວາມຕ້ອງການ ຫຼື ຄວາມຢາກອ່ານ ຖືກກະຕຸ້ນໃຫ້ເກີດຂຶ້ນໄດ້ ໃນບັນດາເດັກນ້ອຍ ແລະ ຊຸມຊົນ.

**ຂໍ້ສະເໜີ**: ການຕອບຮັບໃນທາງບວກຈາກຜູ້ໄດ້ຮັບຜົນປະໂຫຍດ ແມ່ນໂອກາດສຳລັບຄວາມຍືນຍົງ. BNC ຄວນສະໜັບສະໜູນບ້ານເປົ້າໝາຍໃນການພັດທະນາແຜນສຳລັບການສົ່ງເສີມການອ່ານໃນຊຸມຊົນ ພາຍຫຼັງແຜນງານ ສຳເລັດລົງ.

**ບົດຮຽນທີ່ຖອດຖອນໄດ້**: ແນວທາງທີ່ມີຊຸມຊົນເປັນເຈົ້າການ ໃນການປັບປຸງການຮຽນຮູ້ ແລະ ການອ່ານ ຕ້ອງການການພົວພັນຢ່າງເອົາຈິງເອົາຈັງ ລະຫວ່າງຜູ້ທີ່ມີສ່ວນກ່ຽວຂ້ອງຫຼັກໃນຊຸມຊົນເຊັ່ນ: ຜູ້ປົກຄອງ, ເດັກນ້ອຍ, ຄະນະພັດທະນາການສຶກສາຂັ້ນບ້ານ, ຫ້ອງການສຶກສາ ແລະ ກິລາເມືອງ, ຄູ ແລະ ຜູ້ອຳນວຍການໂຮງຮຽນ.

**ຂໍ້ສະເໜີ**: ການມີສ່ວນຮ່ວມຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງເຫຼົ່ານີ້ ຈຳເປັນຕ້ອງໄດ້ຖືກກຳນົດຂຶ້ນສຳລັບແຕ່ລະຂັ້ນຕອນ. ຕົວຢ່າງ, ແຜນການ ຂອງແຜນງານຄວນໃຫ້ລາຍລະອຽດ ຫຼື

ອະທິບາຍວ່າ ຜູ້ທີ່ມີສ່ວນກ່ຽວຂ້ອງຈະພົວພັນກັນແນວໃດ ໃນແຕ່ລະຂັ້ນຕອນ ການກະຕຸ້ນໃຫ້ເກີດມີຄວາມອ່ອນໄຫວ, ການພັດທະນາຄວາມຮູ້, ທັກສະ ແລະ ການປະຕິບັດ.

## ການສົ່ງເສີມການອ່ານທີ່ຊຸມຊົນເປັນເຈົ້າການ

ບົດຮຽນທີ່ຖອດຖອນໄດ້: ການຮັບສະໝັກ ແລະ ຮັກສາອາສາສະໝັກບ້ານ ເພື່ອດຳເນີນວຽກງານສົ່ງເສີມການອ່ານ ແມ່ນສິ່ງໜຶ່ງທີ່ທ້າທາຍໃນການສົ່ງເສີມການອ່ານທີ່ຊຸມຊົນເປັນເຈົ້າການ. ຄວາມບໍ່ມີປະສິດທິພາບທີ່ເກີດຈາກການຊັບຊ້ອນປ່ຽນອາສາສະໝັກຢູ່ເລື້ອຍໆ ແລະ ການຮູ້ໜັງສືຕໍ່າຂອງບັນດາອາສາສະໝັກ ແມ່ນຄວາມສ່ຽງທີ່ການວາງແຜນກິດຈະກໍາຈໍາເປັນຕ້ອງຄໍານຶງເຖິງ.

**ຂໍ້ສະເໜີ**: ການວາງແຜນສໍາລັບ ແຜນງານໃນໄລຍະການກະກຽມມອບຮັບກິດຈະກໍາ ແລະ ການໃຫ້ເປ້ຍລ້ຽງອຸດໜູນຄວນຖືກລວມເຂົ້າໃນແຜນຂອງການກະກຽມປິດແຜນງານ. ຕົວຢ່າງ, ຢ່າງໜ້ອຍ 6 ເດືອນກ່ອນປິດແຜນງານ, ພະນັກງານແຜນງານຄວນອໍານວຍຄວາມສະດວກໃຫ້ມີການວາງແຜນ ລະຫວ່າງ ຄະນະພັດທະນາການສຶກສາຂັ້ນບ້ານ, ໂຮງຮຽນ ແລະ ອາສາສະໝັກ ເພື່ອກໍານົດປະຕິບັດການຕ່າງໆ ທີ່ຊຸມຊົນສາມາດດໍາເນີນໄດ້ເພື່ອເຮັດໃຫ້ກິດຈະກໍາຕ່າງທີ່ສໍາຄັນ ຕໍ່ພວກເຂົານັ້ນ ໃຫ້ມີຄວາມຍືນຍົງຕໍ່ໄປ. ການວາງແຜນແບບມີສ່ວນຮ່ວມເພື່ອຄວາມຍືນຍົງ ທີ່ນໍາໃຊ້ຂະບວນການຕ່າງໆຄ້າຍຄືກັບສິ່ງທີ່ໄດ້ຖືກນໍາໃຊ້ໃນການສ້າງບົດສະເໜີຂໍທຶນຂະໜາດນ້ອຍຂອງ ຄະນະພັດທະນາການສຶກສາຂັ້ນບ້ານ, ຈະຮັບປະກັນວ່າວຽກງານຈະສືບຕໍ່ພາຍຫຼັງສິ້ນສຸດໂຄງການ.

**ບົດຮຽນທີ່ຖອດຖອນໄດ້**: ພຶດຕິກໍາການອ່ານຂອງນັກຮຽນ, ໂດຍສະເພາະຜູ້ທີ່ຢູ່ໃນຊັ້ນປະຖົມຕອນຕົ້ນ, ໄດ້ເຮັດໃຫ້ຮູ້ວ່າ ການອ່ານນອກຫ້ອງຮຽນ ສ່ວນຫຼາຍເກີດຂຶ້ນນໍາການອ່ານ ກັບ ອ້າຍ ຫຼື ເອື້ອຍ. ນີ້ແມ່ນຜົນການສໍາຫຼວດທີ່ມີເຫດຜົນໃນກໍລະນີທີ່ເດັກນ້ອຍມີຄວາມຮັບຜິດຊອບຕໍ່ວຽກງານການດູແລນ້ອງ ແລະ ເຮັດວຽກເຮືອນ.

**ຂໍ້ສະເໜີ**: ກິດຈະກໍາການສົ່ງເສີມການອ່ານໃນອະນາຄົດຄວນພິຈາລະນາ ການລວມເອົາອ້າຍເອື້ອຍຂອງເດັກນ້ອຍເຂົ້ານໍາ ໃນກິດຈະກໍາ ການອ່ານເປັນກຸ່ມ, ການອ່ານກັບໝູ່ອ່ານໜັງສືເພື່ອພັດທະນາ ແລະ ນໍາໃຊ້ຊັບພະຍາກອນຊຸມຊົນເຫຼົ່ານີ້.

## ກົນໄກຄະນະພັດທະນາການສຶກສາຂັ້ນບ້ານ

## ຄະນະພັດທະນາການສຶກສາຂັ້ນບ້ານ

**ບົດຮຽນທີ່ຖອດຖອນໄດ້:** ໂດຍທົ່ວໄປແລ້ວ ຄະນະພັດທະນາການສຶກສາຂັ້ນບ້ານ ມີໜ້າທີ່ຕິດຕາມການສຶກສາອົບຮົມ ແລະ ສົ່ງເສີມການປະຕິບັດຕາມລະບຽບການ ໂດຍຜ່ານການວາງ

ແຜນ ແລະ ການຄຸ້ມຄອງໂຮງຮຽນ. BNC ໄດ້ສະແດງໃຫ້ເຫັນເຖິງທ່າແຮງຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ໃນການເພີ່ມຄວາມສົນໃຈຂອງພວກເຂົາ ເຂົ້າໃນການສະໜັບສະໜູນການຮຽນຮູ້ ແລະ ການອ່ານ ລວມໄປເຖິງ ການສົ່ງເສີມບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງຄົນພິການ.

**ຂໍ້ສະເໜີ:** ຖ້າຢາກໃຫ້ຄະນະພັດທະນາການສຶກສາຂັ້ນບ້ານ ເປັນກົນໄກທ້ອງຖິ່ນທີ່ເຂັ້ມແຂງ, ແນວທາງໃນຮູບແບບການອຳນວຍຄວາມສະດວກ ຕ້ອງຖືກນຳໃຊ້ ເພື່ອເສີມສ້າງຄວາມອາດສາມາດຂອງພວກເຂົາ. ຕົວຢ່າງ, ການຕິດຕາມຄືນພາຍຫຼັງການເຝິກອົບຮົມ ແລະ ການໃຫ້ຄຳແນະນຳໂດຍ ຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະນັກງານແຜນງານ ໃນປີທຳອິດຂອງການຈັດຕັ້ງປະຕິບັດ ຈະຊ່ວຍໃຫ້ສະມາຊິກຄະນະພັດທະນາການສຶກສາຂັ້ນບ້ານ ມີຄວາມເຂົ້າໃຈໜ້າທີ່ຄວາມຮັບຜິດຊອບຂອງພວກເຂົາຢ່າງເລິກເຊິ່ງຂຶ້ນ. ແນວທາງທີ່ແບ່ງແຜນງານອອກເປັນໄລຍະ ໃນການເສີມສ້າງຄວາມອາດສາມາດ ລວມມີ, ການຊຸກຍູ້ໃນປີຕໍ່ໆໄປ ທີ່ເປັນແຮງຈູງໃຈໃຫ້ ຄະນະພັດທະນາການສຶກສາຂັ້ນບ້ານ ບັນລຸໝາກຜົນ ແລະ ສະແດງພຶດຕິກຳຕ່າງໆ ເຊັ່ນ ການສ້າງບົດສະເໜີການປະຕິບັດການ ຫຼື ແຜນການໃນການເຮັດໃຫ້ຜົນໄດ້ຮັບຍືນຍົງ. ພະນັກງານແຜນງານຍັງຈຳເປັນຕ້ອງມີຄວາມອາດສາມາດໃນການປະເມີນໜ້າທີ່ຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ໃຫ້ການຕິດຕາມແນະນຳທີ່ເໝາະສົມໄດ້. ແນວທາງນີ້ ທີ່ເປັນການຊຸກຍູ້ ແລະ ການໃຫ້ລາງວັນ ຈະຕ້ອງໃຊ້ເວລາກ່ອນທີ່ຈະເກີດຂຶ້ນໄດ້ ໂດຍທີ່ ຄະນະພັດທະນາການສຶກສາຂັ້ນບ້ານ ຖືກຖືວ່າເປັນນິຕິບຸກຄົນ, ເນື່ອງຈາກວ່າປະຈຸບັນພວກເຂົາກຳລັງເຮັດໜ້າທີ່ໃນການປະຕິບັດຕາມ ແລະ ຕິດຕາມເທົ່ານັ້ນ.

## ນ້ຳສະອາດ ສຸຂະອະນາໄມ ແລະ ສຸຂາພິບານ (WASH)

**ບົດຮຽນທີ່ຖອດຖອນໄດ້:** ສຸຂະພາບ ແລະ ໂພສະນາການຂອງເດັກນ້ອຍ ມີຜົນກະທົບຕໍ່ຄວາມສາມາດຂອງພວກເຂົາໃນການມີສ່ວນຮ່ວມໃນໂຮງຮຽນ ແລະ ການຮຽນຮູ້. BNC ແນໃສ່ແກ້ໄຂບັນຫານີ້ໃນບາງສ່ວນຜ່ານກິດຈະກຳສຸຂະອະນາໄມໃນໂຮງຮຽນ, ເຖິງຢ່າງໃດກໍ່ຕາມ ຍັງມີຄວາມຈຳເປັນທີ່ຕ້ອງມີຫຼາຍວຽກງານກວ່ານີ້ໃນການສົ່ງເສີມສຸຂະພາບ ແລະ ສຸຂະອະນາໄມຂອງເດັກ. ຕົວຢ່າງ, ໂຄງການອາຫານໂລກ (WFP) ໄດ້ດຳເນີນວຽກງານຢູ່ເມືອງ ຮຸນ ແລະ ເມືອງງາ, ແຂວງ ອຸດົມໄຊ, ແຕ່ວ່າ ແຜນງານອາຫານໃນໂຮງຮຽນທີ່ສະໜັບສະໜູນໂດຍໂຄງການອາຫານໂລກ ແລະ ກິດຈະກຳສຸຂະອະນາໄມໃນໂຮງຮຽນຂອງ BNC ນັ້ນ ປະກົດວ່າຖືກຈັດຕັ້ງປະຕິບັດພໍໃຜພໍລາວ.

**ຂໍ້ສະເໜີ:** ແຜນງານໃນອະນາຄົດຄວນຊອກຫາວິທີທາງໃນການປະສານງານຮ່ວມມືກັບ ບັນດາໂຄງການ ສຸຂະພາບ/ໂພສະນາການ ແລະ ແນໃສ່ປ່ຽນແປງພຶດຕິກຳໂດຍຜ່ານການນຳໃຊ້

ແນວທາງທີ່ແບ່ງອອກເປັນໄລຍະ ທີ່ສາມາດເຫັນການປ່ຽນແປງໄດ້ ໃນໄລຍະສັ້ນ, ກາງ ແລະ ຍາວ. ໃນຂັ້ນຕອນການວາງແຜນ, ຄວນມີການທົບທວນຜົນໄດ້ຮັບຂອງທຸກໆໂຄງການຢູ່ໃນພື້ນທີ່ເປົ້າໝາຍ ເພື່ອເຫັນໄດ້ບັນດາວຽກງານທີ່ມີການເຮັດວຽກຮ່ວມກັນໄດ້. ໃນກໍລະນີທີ່ເປັນໄປໄດ້, ອົງການຄູ່ຮ່ວມມືໃນພື້ນທີ່ເປົ້າໝາຍດຽວກັນ ຄວນປຶກສາຫາລື ແລະ ໂອ້ລົມກັນກ່ຽວກັບຍຸດທະສາດໃນການປະສານສົມທົບບັນດາກິດຈະກຳຕ່າງໆຮ່ວມກັນ ເພື່ອເສີມສ້າງໂອກາດໃນການປ່ຽນແປງພຶດຕິກຳ. ຕົວຢ່າງ, ກອງປະຊຸມ ກ່ຽວກັບໂຄງການອາຫານໃນໂຮງຮຽນສາມາດປະຕິບັດຮ່ວມກັນກັບການສາທິດການແຕ່ງກິນ ແລະ ຂໍ້ຄວາມກ່ຽວກັບການລ້າງມືກ່ອນການແຕ່ງກິນ, ກ່ອນກິນເຂົ້າ ແລະ ພາຍຫຼັງກິນເຂົ້າແລ້ວ.

**ບົດຮຽນທີ່ຖອດຖອນໄດ້**: ການລ້າງມື ແລະ ຖູແຂ້ວເປັນປະຈຳ ຍັງບໍ່ປະຕິບັດ ແລະ ນຳໃຊ້ຢ່າງສະໝໍ່າສະເໝີ. ຄູບາງຄົນໄດ້ລະບຸບັນຫາໃນການປະສານສົມທົບກິດຈະກຳເຫຼົ່ານີ້ ກັບນັກຮຽນຈຳນວນຫຼາຍ ແລະ ການຈັດສັນເວລາສຳລັບການສິດສອນ ແລະ ກິດຈະກຳສຸຂະອະນາໄມ.

**ຂໍ້ສະເໜີ**: ໃນໄລຍະສັ້ນ ແລະ ໄລຍະກາງ, ຄວນມີການຕິດຕາມເພື່ອສະໜັບສະໜູນໃນຮູບແບບຂອງ ການຕິດຕາມໃຫ້ຄຳແນະນຳ (ເຊິ່ງໜ້າ ຫຼື ທາງໂທລະສັບ) ແລະ ການເຝິກອົບຮົມທວນຄືນບົດຮຽນທຸກໆສອງອາທິດ ໃຫ້ແກ່ບັນດາຄູ ທີ່ພົບຄວາມຫຍຸ້ງຍາກໃນການຊ່ວຍໃຫ້ນັກຮຽນລ້າງມື ແລະ ຖູແຂ້ວເປັນປະຈຳ. ການຕິດຕາມໃຫ້ຄຳແນະນຳ ແລະ ການທວນຄືນບົດຮຽນນັ້ນ ຄວນແນະນຳຍຸດທະສາດຕ່າງໆ ທີ່ບັນດາຄູສາມາດນຳໃຊ້ເຂົ້າໃນການສັງລວມເອົາວຽກງານສຸຂະອະນາໄມເຂົ້າໃນບົດຮຽນ, ໃນຊົ່ວໂມງພັກຫຼີ້ນ, ແລະ ໃຫ້ການສະໜັບສະໜູນໃນການສ້າງຕາຕະລາງໃຫ້ນັກຮຽນທັງໝົດໃນໂຮງຮຽນນຳໃຊ້ນ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ແລະ ສຸຂະອະນາໄມ ແລະ ວິທີເບິ່ງແຍ່ງດູແລສິ່ງອຳນວຍຄວາມສະດວກດັ່ງກ່າວ ແລະ ຮັກສາອຸປະກອນຕ່າງໆນັ້ນ (ໄມ້ຖູແຂ້ວ ແລະ ກະຕຸກນ້ຳດື່ມ) ໃຫ້ສະອາດ.

**ບົດຮຽນທີ່ຖອດຖອນໄດ້**: ການເຂົ້າເຖິງນ້ຳແລະ ການສະໜອງນ້ຳ ແມ່ນມີຄວາມສຳຄັນກ່ອນທີ່ຈະສາມາດປະຕິບັດ ສຸຂະອະນາໄມທີ່ດີໄດ້. ການຂາດແຄນແຫຼ່ງສະໜອງນ້ຳທີ່ຄົນສາມາດເຂົ້າເຖິງໄດ້ ຄວບຄູ່ກັບຄວາມຫຼ້າຊ້າໃນດ້ານການຈັດຊື້ ໄດ້ເຮັດໃຫ້ວຽກງານ WASH ມີປະສິດທິພາບທີ່ຈຳກັດ ໃນຢ່າງໜ້ອຍ 22% ຂອງຈຳນວນໂຮງຮຽນ (37 ແຫ່ງ).

**ຂໍ້ສະເໜີ**: ການຮ່ວມມືກັນຢ່າງໃກ້ຊິດກັບຄະນະພັດທະນາການສຶກສາຂັ້ນບ້ານ, ຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະແນກສຶກສາ ແລະ ກິລາແຂວງ ໃນການແກ້ໄຂບັນຫາການເຂົ້າເຖິງນ້ຳ ຄວນເປັນບູລິມະສິດກ່ອນໜ້າທີ່ນ້ຳ, ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ແລະ ສຸຂະອະນາໄມຕ່າງໆ ຈະຖືກຕິດຕັ້ງ. ຕົວຢ່າງ, ການປະເມີນຢ່າງເລິກເຊິ່ງ ກ່ຽວກັບແຫຼ່ງນ້ຳ ແລະ ຄຸນນະພາບຂອງນ້ຳ ໃນໝູ່ບ້ານ ແລະ ໂຮງຮຽນ ຄວນຖືກດຳເນີນການ ແລະ ການສ້າງຕັ້ງ

ແຜນການ ນ້ຳສະອາດ ສຸຂາພິບານ ແລະ ສຸຂະອະນາໄມ ສຳລັບການນຳໃຊ້, ຕິດຕາມ ແລະ ການບຳລຸງຮັກສາ ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ກິດຈະກຳສຸຂະອະນາໄມ ຈະເສີມສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານນີ້.

**ການຕິດຕາມ ແລະ ການປະເມີນຜົນ**

**ບົດຮຽນທີ່ຖອດຖອນໄດ້**: ຕົວຊີ້ວັດ (ອັດຕາການລົງທະບຽນເຂົ້າຮຽນລວມ, ອັດຕາການລົງທະບຽນເຂົ້າຮຽນສຸດທິ ແລະ ອັດຕາປະລະການຮຽນ) ສຳລັບ ຜົນໄດ້ຮັບຂອງ BNC ສາມາດເຮັດໃຫ້ສອດຄ່ອງຂຶ້ນກວ່າເກົ່າ. ຜົນໄດ້ຮັບ, ຈຸດປະສົງ ແລະ ຕົວຊີ້ວັດ ໄດ້ຖືກສ້າງຂຶ້ນໃນທ້າຍປີ 2016 ແລະ ຖືກທົບທວນຄືນໃນປີ 2017. ຕົວຊີ້ວັດ - ອັດຕາການລົງທະບຽນເຂົ້າຮຽນລວມ, ເຊິ່ງແມ່ນຕົວແທນຂອງການປ່ຽນແປງໃນອັດຕາສ່ວນຂອງເດັກທີ່ເຂົ້າຮຽນຊັ້ນປະຖົມ ແມ່ນບໍ່ມີຄວາມຈຳເປັນ ເນື່ອງຈາກວ່າ ອັດຕາການລົງທະບຽນເຂົ້າຮຽນສຸດທິ ແມ່ນພຽງພໍແລ້ວ.

**ຂໍ້ສະເໜີ**: ການເພີ່ມຂຶ້ນຂອງ ອັດຕາການລອດເຫຼືອ ຫຼື ອັດຕາການຈົບຊັ້ນຮຽນ ແມ່ນຕົວຊີ້ວັດທີ່ດີກວ່າ ທີ່ຈະສະແດງໃຫ້ ເຫັນເຖິງການເຂົ້າຮຽນໃນ ຊັ້ນປໍ 1 ແລະ ການສືບຕໍ່ການເຂົ້າຮຽນໃນການສຶກສາຈົບຮອດຊັ້ນປະຖົມ ຊັ້ນປໍ 5.

**ບົດຮຽນທີ່ຖອດຖອນໄດ້**: ຖ້າການປະຢັດຕົ້ນທຶນ ເປັນສິ່ງທີ່ຜູ້ໃຫ້ທຶນ ແລະ ຜູ້ວາງແຜນງານ ໃຫ້ຄວາມສົນໃຈ, ຂໍ້ມູນ ດ້ານງົບປະມານເພື່ອວິເຄາະປະສິດທິຜົນຂອງການໃຊ້ຈ່າຍ ຄວນສ້າງຂຶ້ນໃນແຜນການຕິດຕາມ,ປະເມີນຜົນ ແລະ ເກັບກຳຢ່າງເປັນລະບົບໂດຍພະນັກງານແຜນງານ.

**ຂໍ້ສະເໜີ**: ຂໍ້ມູນດ້ານການເງິນສຳລັບການລາຍງານຕາມກິດຈະກຳ, ວຽກງານດ້ານບົດບາດຍິງຊາຍ ແລະ ວຽກງານດ້ານຄວາມພິການ ຄວນຖືກກຳນົດໃນລະຫວ່າງການວາງແຜນແຜນງານ ແລະ ເປັນສ່ວນໜຶ່ງຂອງຂອບວຽກງານການຕິດຕາມ ແລະ ປະເມີນຜົນ. ຂັ້ນຕອນປະຕິບັດສຳລັບການຕິດຕາມ ແລະ ເກັບກຳຂໍ້ມູນຄວນນຳໃຊ້ເຄື່ອງມືທີ່ງ່າຍດາຍ, ຈະແຈ້ງ ແລະ ມີຂໍ້ແນະນຳວິທີການນຳໃຊ້ໃຫ້ແກ່ພະນັກງານແຜນງານ ແລະ ຫ້ອງການສຶກສາ ແລະ ກິລາເມືອງ. ຄວນມີການເຝິກອົບຮົມທີ່ເໝາະສົມ ແລະ ມີການຕິດຕາມກັບພະນັກງານໃນທີມຫ້ອງການເມືອງ ເພື່ອຮັບປະກັນວ່າ ການເກັບກຳຂໍ້ມູນມີຄວາມສອດຄ່ອງ ແລະ ຖືກຕ້ອງ.

**ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ**

**ບົດຮຽນທີ່ຖອດຖອນໄດ້**: BNC ໄດ້ສາທິດໃຫ້ເຫັນວ່າ ງົບປະມານສະເພາະສຳລັບຄວາມພິການ ແລະ ຄວາມຍືດຢຸ່ນ ໃນງົບປະມານຂອງແຜນງານ ເພື່ອອຳນວຍຄວາມສະດວກໃຫ້ເດັກຍິງ ແລະ ແມ່ຍິງມີສ່ວນຮ່ວມ ໄດ້ສົ່ງຜົນໃຫ້ມີລະດັບການເຂົ້າຮ່ວມດີຂຶ້ນຈາກກຸ່ມຄົນເຫຼົ່ານີ້. BNC ຍັງໄດ້ສຸມໃສ່ ການສ້າງຄວາມອາດສາມາດຂອງ ພະນັກງານແຜນງານ, ການຈັດຫາຊ່ຽວຊານ

ວິຊາການ ໃນດ້ານຄວາມພິການ ແລະ ຈັດຊື້ເຄື່ອງມືດ້ານຄວາມພິການ ເພື່ອໃຫ້ບັນດາຄູໄດ້ນໍາໃຊ້.

**ຂໍ້ສະເໜີ:** ຄວາມມຸ່ງໝັ້ນທີ່ຈະແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມພິການຄວນຖືກສະທ້ອນໃຫ້ເຫັນໃນການຈັດສັນຊັບພະຍາກອນຂອງແຜນງານເຊັ່ນກັນ. ເພື່ອສົ່ງເສີມຄວາມສະເໝີພາບບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງຄົນພິການ, ແຜນງານຄວນພິຈາລະນາໃຫ້ມີການລົງທຶນເພີ່ມຕື່ມເຂົ້າໃນການວິເຄາະເນື້ອຫາຂອງບົດບາດຍິງຊາຍ ແລະ ຄວາມພິການໃນພື້ນທີ່ເປົ້າໝາຍ. ເຊິ່ງຈະເປັນຂໍ້ມູນທຽບຖານ ທີ່ຈະຮັບປະກັນວ່າ ການປ່ຽນແປງສາມາດຖືກວັດແທກໄດ້ ແລະ ເປັນຂໍ້ມູນດ້ານວິຊາການສໍາລັບວຽກງານບົດບາດຍິງຊາຍ. ເນື່ອງຈາກວ່າ ການມີສ່ວນຮ່ວມຂອງຄົນພິການ ແລະ ຄວາມສະເໝີພາບບົດບາດຍິງຊາຍເປັນຄໍາໝັ້ນສັນຍາທີ່ສໍາຄັນ, ວຽກງານດັ່ງກ່າວນີ້ ຈຶ່ງຈໍາເປັນຕ້ອງສະທ້ອນໃຫ້ເຫັນໃນງົບປະມານແຜນງານ ແລະ ການລາຍງານດ້ານການເງິນ. ພະນັກງານແຜນງານຄວນໄດ້ຮັບການສະໜັບສະໜູນໃນການເກັບກໍາ ແລະ ລາຍງານຂໍ້ມູນກ່ຽວກັບວຽກງານດ້ານຄວາມພິການ ແລະ ບົດບາດຍິງຊາຍ. ສິ່ງເຫຼົ່ານີ້ຈະຕ້ອງໃຊ້ເວລາ ໃນການຈັດຕັ້ງປະຕິບັດ ເພື່ອໃຫ້ເກີດຜົນຮັບ , ເຊິ່ງຈະບໍ່ຊ່ວຍໃຫ້ແຜນງານມີປະສິດທິຜົນສະເໝີໄປ, ແຕ່ວ່າ ມັນຈະເຮັດໃຫ້ແຜນງານມີຜົນກະທົບທີ່ດີຂຶ້ນໄດ້.

## ຄວາມພິການ

**ບົດຮຽນທີ່ຖອດຖອນໄດ້:** ຄວາມເຂົ້າໃຈໃນການເຜີຍແຜ່ຄວາມຮູ້ກ່ຽວກັບຄົນພິການ ແລະ ທໍາມະຊາດຂອງຄວາມພິການ ໃນບັນດາຄູ ແລະ ຊຸມຊົນຍັງຈໍາກັດ. ບັນດາຄູ່ຮ່ວມງານຂອງ BNC ໄດ້ເກັບກໍາຂໍ້ມູນຄວາມພິການຢ່າງເປັນລະບົບຈາກກິດຈະກໍາການສົ່ງເສີມການອ່ານ ແລະ ບົດສະເໜີຂໍທຶນ ແລະ ການຈັດຕັ້ງປະຕິບັດກອງທຶນຄະນະພັດທະນາການສຶກສາຂັ້ນບ້ານ. ຂໍ້ມູນກ່ຽວກັບຜົນໄດ້ຮັບຂອງການໃຫ້ການສະໜັບສະໜູນ ເພື່ອການກວດສຸຂະພາບ, ແຜນງານການສຶກສາຮຽນຮ່ວມ (IEP) ແລະ ອຸປະກອນຊ່ວຍເຫຼືອຕ່າງໆ ແມ່ນມີຈໍາກັດ.

**ຂໍ້ສະເໜີ:** ຈໍາເປັນຕ້ອງມີຂໍ້ມູນທີ່ຖືກຕ້ອງກ່ຽວກັບຈໍານວນຂອງເດັກທີ່ມີຄວາມພິການ ແລະ ຄຸນນະພາບຂອງການມີສ່ວນຮ່ວມຂອງເຂົາເຈົ້າ ເພື່ອສົ່ງເສີມກິດຈະກໍາຕ່າງໆສໍາລັບຄົນກຸ່ມນີ້. ເພື່ອໃຫ້ໄດ້ຮັບຂໍ້ມູນທີ່ຖືກຕ້ອງ ແລະ ລະອຽດຂຶ້ນກ່ຽວກັບເດັກທີ່ມີຄວາມພິການ, ຜູ້ທີ່ມີສ່ວນຮ່ວມຫຼາຍພາກສ່ວນຈໍາເປັນຕ້ອງມີສ່ວນກ່ຽວຂ້ອງໃນຂະບວນການເກັບກໍາຂໍ້ມູນ. 1) ພະນັກງານແຜນງານຄວນໄດ້ຮັບການເຝິກອົບຮົມຢ່າງເໝາະສົມກ່ຽວກັບການມີສ່ວນຮ່ວມຂອງຄົນພິການ ແລະ ລະບຽບຂັ້ນຕອນໃນການເກັບກໍາຂໍ້ມູນ; 2) ສະມາຊິກໃນຊຸມຊົນ ຜູ້ທີ່ຈະເກັບກໍາຂໍ້ມູນການຕິດຕາມຕາງໜ້າແຜນງານຄວນໄດ້ຮັບການເຝິກອົບຮົມຢ່າງເໝາະສົມ

ແລະ ໄດ້ຮັບການສະໜັບສະໜູນທີ່ພຽງພໍ ຕະຫຼອດໄລຍະຂອງແຜນງານ ເພື່ອເພີ່ມຄວາມເຂົ້າໃຈກ່ຽວກັບຄວາມພິການ ແລະ ການເກັບກຳຂໍ້ມູນຂອງພວກເຂົາ; ແລະ 3) ຄູ່ຮ່ວມຈັດຕັ້ງປະຕິບັດ ມີຄວາມເຂົ້າໃຈອັນດຽວກັນກ່ຽວກັບຈຸດປະສົງຂອງການມີສ່ວນຮ່ວມຂອງຄົນພິການ, ຄວາມໝາຍຂອງຄຳວ່າຄວາມພິການ, ວິທີການກຳນົດຄວາມພິການ, ແລະ ວິທີການເກັບກຳຂໍ້ມູນຢ່າງເປັນລະບົບ.

**ບົດຮຽນທີ່ຖອດຖອນໄດ້**: ກິດຈະກຳການມີສ່ວນຮ່ວມຂອງຄົນພິການໃນ BNC ແນໃສ່ປູກຈິດສຳນຶກໃນບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ, ຄວາມຕ້ອງການສ່ວນບຸກຄົນ ຂອງເດັກທີ່ມີຄວາມພິການ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເຄືອຂ່າຍຂອງການສະໜັບສະໜູນສຳລັບເດັກທີ່ມີຄວາມພິການ ໂດຍການນຳເອົາອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຜູ້ສະໜອງການບໍລິການພາກລັດເຂົ້າມາຮ່ວມນຳກັນ. ການມີສ່ວນຮ່ວມຂອງຄົນພິການໃນລາວ ແມ່ນວຽກງານທີ່ກຳລັງພົ້ນເດັ່ນຂຶ້ນ ແລະ BNC ໄດ້ສະແດງໃຫ້ເຫັນວ່າ ມີສິ່ງໃດທີ່ສາມາດບັນລຸໄດ້ໃນໄລຍະປະມານສອງປີ ຖ້າມີຊັບພະຍາກອນທີ່ສຸມໃສ່ວຽກງານນີ້ໂດຍສະເພາະ.

**ຂໍ້ສະເໜີ**: ກິດຈະກຳຊ່ວຍເຫຼືອເພື່ອການມີສ່ວນຮ່ວມຂອງຄົນພິການ ຕ້ອງການວິໄສທັດຂອງການປ່ຽນແປງໃນ ໄລຍະກາງ ແລະໄລຍະຍາວ ໃນລະດັບທີ່ແຕກຕ່າງກັນ - ລະດັບບຸກຄົນ, ຄອບຄົວ, ໂຮງຮຽນ ແລະ ຊຸມຊົນ. ການຊ່ວຍເຫຼືອຕ່າງໆ ຄວນລວມເອົາແນວທາງການມີສ່ວນຮ່ວມຫຼາຍຮູບແບບ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງຫຼາຍຝ່າຍ ເພື່ອແກ້ໄຂດ້ານຄວາມເຂົ້າໃຈກ່ຽວກັບຄວາມພິການ, ອະຄະຕິທາງວັດທະນາທຳກ່ຽວກັບຄວາມພິການ, ການສະໜອງຄວາມຮູ້ທົ່ວໄປ ແລະ ເຕັກນິກຕ່າງໆທີ່ຄູສາມາດເຂົ້າເຖິງໄດ້.

**ບົດຮຽນທີ່ຖອດຖອນໄດ້**: ຊັບພະຍາກອນມະນຸດ ແລະ ຄວາມຊ່ຽວຊານໃນວຽກງານດ້ານຄວາມພິການແມ່ນມີຈຳກັດໃນລາວ. ການສະໜັບສະໜູນດ້ານສຸຂະພາບທີ່ມີຢູ່ໃນປະຈຸບັນແມ່ນກະຈັດກະຈາຍ ແລະ ຄວາມຊ່ຽວຊານໃນຂະແໜງການພັດທະນາແມ່ນມີໜ້ອຍ.

**ຂໍ້ສະເໜີ**: ການແກ້ໄຂທີ່ເປັນລະບົບສຳລັບການສົ່ງຕໍ່ຜູ້ປ່ວຍ, ການເຊື່ອມໂຍງຂອງການບໍລິການ, ການສ້າງຄວາມ ອາດສາມາດດ້ານສະຖາບັນຂອງການສຶກສາ ແລະ ອົງການດ້ານສຸຂະພາບ ແລະ ອົງການຈັດຕັ້ງຄົນພິການ[1], ການຮ່ວມມືລະຫວ່າງ ອົງການສາກົນທີ່ບໍ່ສັງກັດລັດຖະບານ ແມ່ນມີຄວາມຈຳເປັນເພື່ອເສີມຂະຫຍາຍຄວາມຊ່ຽວຊານໃນປະເທດໃຫ້ຫຼາຍທີ່ສຸດ. ໂດຍນຳໃຊ້ປະສົບການຂອງ BNC, ການເກັບບັນທຶກຂໍ້ມູນກ່ຽວກັບພູມສັນຖານຂອງການບໍລິການດ້ານຄວາມພິການ ສາມາດຖືກວາງເປັນແຜນທີ່ທິດທາງ ເພື່ອສະໜັບສະໜູນ

[1] [1] Disabled People's Organisations (DPOs)

ການຈັດຕັ້ງປະຕິບັດ ຍຸດທະສາດ ແຜນງານປີຄວາ ສໍາລັບວຽກງານດ້ານບົດບາດຍິງຊາຍ, ການມີສ່ວນຮ່ວມຂອງຄົນພິການ ແລະ ສັງຄົມ.

**ບົດຮຽນທີ່ຖອດຖອນໄດ້**: ເດັກນ້ອຍທີ່ມີບັນຫາດ້ານຄວາມພິການທີ່ສັບສົນ ແລະ ຄວາມດ້ອຍໂອກາດ ແມ່ນໄດ້ຮັບການ ສະໜັບສະໜູນທີ່ເປັນເປົ້າໝາຍຈາກ BNC. ຄໍາຄິດເຫັນຈາກເດັກນ້ອຍ ແລະ ຜູ້ປົກຄອງກ່ຽວກັບສະຖານະການ ດັ່ງກ່າວນີ້ ໄດ້ເປີດເຜີຍໃຫ້ເຫັນວ່າ ມັນຈໍາເປັນທີ່ຕ້ອງມີແນວທາງທີ່ລະອຽດອ່ອນຫຼາຍກວ່າເກົ່າ ເພື່ອຮັບປະກັນ ປະສົບການຂອງການສະໜັບສະໜູນແມ່ນມີຄວາມໝາຍ ຕໍ່ຜູ້ໄດ້ຮັບຜົນປະໂຫຍດຫຼາຍກວ່າການດໍາເນີນງານພຽງເທົ່ານັ້ນ.

**ຂໍ້ສະເໜີ**: ແນວທາງການປຶກສາຫາລື ແລະ ການມີສ່ວນຮ່ວມ ຄວາມຖືກນໍາໃຊ້ ເມື່ອເຮັດວຽກຮ່ວມກັບເດັກທີ່ມີຄວາມພິການ ແລະ ຄອບຄົວຂອງເຂົາເຈົ້າ. ການສະໜັບສະໜູນສໍາລັບເດັກທີ່ມີຄວາມພິການຄວນລວມມີການສະໜັບສະໜູນທັງຈາກເຮືອນ ແລະ ໂຮງຮຽນ. ຕົວຢ່າງ, ເດັກ ແລະ ຜູ້ປົກຄອງຄວນໄດ້ປຶກສາຫາລືໃນທຸກຂັ້ນຕອນຂອງການປິ່ນປົວ ແລະ ກິດຈະກໍາຕ່າງໆ ເພື່ອຮັບປະກັນວ່າການເຂົ້າຊ່ວຍເຫຼືອແກ້ໄຂນັ້ນເໝາະສົມ ແລະ ສົ່ງເສີມຄຸນນະພາບຂອງການມີສ່ວນຮ່ວມ. ກົນໄກການໃຫ້ຄໍາຄິດເຫັນຄວນລວມຢູ່ໃນກິດຈະກໍາຕ່າງໆ ເພື່ອອະນຸຍາດໃຫ້ຜູ້ໄດ້ຮັບຜົນປະໂຫຍດໄດ້ມີການປະກອບສ່ວນເຂົ້າໃນກິດຈະກໍາ ແລະ ການສະໜັບສະໜູນຂອງພວກເຂົາ. ຕົວຢ່າງ, ການປຶກສາຫາລືສາມາດບັນທຶກຂໍ້ສະເໜີຈາກເດັກທີ່ມີຄວາມພິການ ແລະ ຜູ້ດູແລເຂົາເຈົ້າ; ການລົງຕິດຕາມກັບ ເດັກທີ່ມີຄວາມພິການສາມາດທົບທວນປະຕິບັດການຕ່າງໆທີ່ໄດ້ຕົກລົງໄວ້ ໂດຍຄອບຄົວ, ໂຮງຮຽນ ແລະ ພະນັກງານໂຄງການ ແລະ ກິດຈະກໍາເປັນກຸ່ມ ສາມາດຮວມເອົາກິດຈະກໍາການອອກຄໍາຄິດເຫັນໄດ້ເຊັ່ນກັນ.

## ບົດບາດຍິງຊາຍ

**ບົດຮຽນທີ່ຖອດຖອນໄດ້**: ບັນຫາທີ່ກ່ຽວຂ້ອງກັບຄວາມບໍ່ສະເໝີພາບ ແລະ ການແບ່ງແຍກຊົນຊັ້ນແມ່ນບັນຫາທີ່ ແກ້ໄຂໄດ້ບໍ່ງ່າຍດາຍໃນໄລຍະສັ້ນແລະໄລຍະກາງ. ປັດໃຈທີ່ຊັບຊ້ອນເຊັ່ນຄວາມທຸກຍາກ, ຄວາມຫ່າງໄກສອກຫຼີກ, ບັນທັດຖານທາງສັງຄົມ ແມ່ນຢູ່ນອກເໜືອຂອບເຂດຂອງ BNC. ໃນທາງກັບກັນ, ປັດໄຈນໍາເຂົ້າຕ່າງໆ ເຊັ່ນ ທຶນຊ່ວຍເຫຼືອລ້າ, ການເຝິກອົບຮົມ ແລະ ວັດຖຸອຸປະກອນຕ່າງໆ ໄດ້ຖືກນໍາໃຊ້ເພື່ອເປັນການທົດແທນໃຫ້ແກ່ຊຸມຊົນ ເພື່ອສົ່ງເສີມຄວາມສະເໝີພາບດ້ານບົດບາດຍິງຊາຍ, ໂດຍສະເພາະ ການມີສ່ວນຮ່ວມ ແລະ ການເຂົ້າເຖິງທີ່ເທົ່າທຽມກັນ. ຈຸດປະສົງດ້ານຄວາມເທົ່າທຽມກັນໃນດ້ານອື່ນໆ ເຊັ່ນ ການປັບປຸງການມີສ່ວນຮ່ວມຂອງຜູ້ຍິງ ແລະ ເດັກຍິງໃຫ້ດີຂຶ້ນໃນຂະບວນການຕັດສິນໃຈ, ອົງການ ແລະ ຜູ້ນໍາພາແມ່ນຕ້ອງການການວາງແຜນໄລຍະກາງ ແລະ ໄລຍະຍາວ.

**ຂໍ້ສະເໜີ**: ວິທີການເພື່ອເພີ່ມການເຂົ້າເຖິງ ແລະ ຄຸນນະພາບຂອງການມີສ່ວນຮ່ວມໃຫ້ຫຼາຍຂຶ້ນ ໃນໄລຍະສັ້ນ ແລະ ໄລຍະກາງນັ້ນ ສາມາດຮວມເອົາຈໍານວນໂກຕ້າຕາມເພດ ສໍາລັບຄະນະກໍາມະການ ແລະ ກອງປະຊຸມເຝິກອົບຮົມໄດ້, ແລະ ຄວາມພະຍາຍາມທີ່ຖືກປັບປຸງໃຫ້ດີຂຶ້ນເພື່ອດໍາເນີນກິດຈະກໍາຕ່າງໆ ໃນຂັ້ນບ້ານທີ່ເປັນລັກສະນະແບບມີສ່ວນຮ່ວມ ແລະ ເໝາະສົມສໍາລັບສະພາບແວດລ້ອມຂອງການຮູ້ໜັງສືຕໍ່າ ຫຼາຍກວ່າທີ່ຈະເປັນກອງປະຊຸມແບບເປັນທາງການເທົ່ານັ້ນ.

**ບົດຮຽນທີ່ຖອດຖອນໄດ້**: ການສັງລວມບົດບາດຍິງຊາຍເຂົ້າໃນ ກິດຈະກໍາ BNC ໄດ້ເນັ້ນໜັກໃສ່ ການສະໜັບສະໜູນ ສ່ວນບຸກຄົນ ແລະ ເປັນກຸ່ມ (ຜູ້ນໍາກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານ, ນັກຮຽນ, ແລະ ຄູ) ເພື່ອເພີ່ມການເຂົ້າເຖິງ ແລະ ການມີສ່ວນ ຮ່ວມທີ່ເພີ່ມຂຶ້ນ. ການເຂົ້າເຖິງ ແລະ ການມີສ່ວນຮ່ວມທີ່ເພີ່ມຂຶ້ນໄດ້ມີປະສິດທິພາບອັນໃຫຍ່ຫຼວງ ທາງດ້ານຂອງການປູກຈິດສໍານຶກກ່ຽວກັບຄວາມສະເໝີພາບບົດບາດຍິງຊາຍ, ການມີສ່ວນຮ່ວມໃນກິດຈະກໍາຕ່າງໆ ແລະ ກິດຈະກໍາ ການຕິດຕາມທີ່ສະໜັບສະໜູນການສັງລວມເອົາບົດບາດຍິງຊາຍເຂົ້າໃນວຽກງານ.

**ຂໍ້ສະເໜີ**: ບົດບາດຍິງຊາຍ, ຄຽງຄູ່ກັບ ຄວາມພິການ, ແມ່ນຄໍາໝັ້ນສັນຍາອັນໜຶ່ງໃນຈຸດປະສົບ BNC, ແຜນງານ ຈະຖືກເຮັດໃຫ້ເຂັ້ມແຂງຂຶ້ນໂດຍການສ້າງແນວທາງໃນແຜນໂຄງການ ແລະ ຂອບຂ່າຍວຽກງານການຕິດຕາມ ກວດກາເພື່ອບັນລຸຄວາມສະເໝີພາບດ້ານບົດບາດຍິງຊາຍ (ແລະ ການມີສ່ວນຮ່ວມຂອງຄົນພິການ) ໃນໄລຍະສັ້ນ, ກາງ ແລະ ຍາວ. ນອກຈາກນີ້, ການເຮັດໃຫ້ຂອບເຂດຂອງຄວາມສະເໝີພາບດ້ານບົດບາດຍິງຊາຍ (ແລະ ການມີສ່ວນຮ່ວມຂອງຄົນພິການ) ຂອງໂຄງການມີຄວາມຈະແຈ້ງຂຶ້ນ ສໍາລັບໄລຍະຂອງໂຄງການ. ຕົວຢ່າງ, ແຜນໂຄງການ ແລະ ຂອບເຂດວຽກງານ ວັດແລະປະເມີນຜົນ ຄວນຮັບຮູ້ວ່າກິດຈະກໍາຈະ ຫຼື ຈະບໍ່ ກະທົບບົດບາດຍິງຊາຍ ແລະ ຄວາມພິການ ໃນລະດັບບຸກຄົນ, ຊຸມຊົນ ແລະ ສະຖາບັນຄືແນວໃດ.

## ຄວາມຍືນຍົງ

**ບົດຮຽນທີ່ຖອດຖອນໄດ້**: ຄວາມຍືນຍົງ ແລະ ແນວຄວາມຄິດການຂະຫຍາຍໂຄງການອອກຕື່ມຖືກກ່າວເຖິງເປັນປະຈໍາ. ຖ້າອົງປະກອບ BNC ແມ່ນເພື່ອໃຫ້ເກີດຄວາມຍືນຍົງ ແລະ ຂະຫຍາຍອອກ, ສິ່ງດັ່ງກ່າວນີ້ຈະເກີດຂຶ້ນໄດ້ແນວໃດນັ້ນແມ່ນຍັງບໍ່ທັນຖືກວາງອອກໃນແຜນໂຄງການ ຫຼື ຂອບເຂດວຽກງານ ວັດແລະປະເມີນຜົນເທື່ອ. ອົງປະກອບການສອນພາສາລາວໃຫ້ເດັກຊົນເຜົ່າໂດຍແທ້ຈິງແລ້ວໄດ້ມີຜົນໄດ້ຮັບຫຼາຍຮູບແບບຂອງການຂະຫຍາຍອອກ. ເບິ່ງຕົວຢ່າງໃນພາກທີ **3.5.1.** ຈຸດອ່ອນໃນກິດຈະກໍາ **WASH** ໃນການປັບປຸງການປະຕິບັດດ້ານສຸຂະ

ອະນາໄມທີ່ດີ ກໍ່ຄື ການເນັ້ນໜັກໃສ່ ການຕິດຕັ້ງອຸປະກອນ ແຕ່ມີການວາງແຜນຂ້ອນຂ້າງຈຳກັດ ສຳລັບການສົ່ງເສີມການປະຕິບັດທີ່ດີໃນລະຫວ່າງ ການຈັດຕັ້ງປະຕິບັດ ແລະ ພາຍຫຼັງ BNC ສິ້ນສຸດລົງ. ການມີສ່ວນຮ່ວມຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ໄດ້ສະແດງໃຫ້ເຫັນ ວ່າມັນມີທ່າແຮງສຳລັບຄະນະກຳມະການທີ່ຈະເຮັດໜ້າທີ່ເປັນສູນກາງໃນການສະໜັບສະໜູນການຮຽນຮູ້ ແລະ ການອ່ານໃນຊຸມຊົນ. ຂໍ້ຈຳກັດແມ່ນ ການຂາດການວາງແຜນຊຸມຊົນເພື່ອສືບຕໍ່ຜົນໄດ້ຮັບ ພາຍຫຼັງ ສິ້ນສຸດ BNC.

**ຂໍ້ສະເໜີ**: ການວາງແຜນສຳລັບຄວາມຍືນຍົງ ຄວນມີຂຶ້ນໃນຂັ້ນຕອນການວາງແຜນໂຄງການ ແລະ ຄວນຖືກທົບທວນຄືນແຕ່ລະປີພ້ອມກັບແຜນກິດຈະກຳ. ຂະບວນການວາງແຜນດັ່ງກ່າວນີ້ຄວນລວມເອົາການປະກອບສ່ວນ ຈາກຜູ້ມີສ່ວນຮ່ວມທີ່ສຳຄັນ (ຜູ້ໃຫ້ທຶນ, ອົງການຈັດຕັ້ງປະຕິບັດ, ຄູ່ຮ່ວມພາກລັດ ແລະ ຊຸມຊົນ) ກ່ຽວກັບຄວາມ ເຂົ້າໃຈຂອງຄວາມຍືນຍົງຂອງແຕ່ລະພາກສ່ວນ ແລະ ຈະບັນລຸໄດ້ສິ່ງດັ່ງກ່າວນັ້ນແນວໃດ. ຕົວຢ່າງ, DFAT ອາດຈະເຂົ້າໃຈ ຄວາມຍືນຍົງໃນຄວາມໝາຍຂອງຄວາມເປັນເຈົ້າການຂອງລັດຖະບານ ຕໍ່ກັບກິດຈະກຳ ແລະ ຊັບພະຍາກອນ, ໃນຂະນະທີ່ ພະແນກສຶກສາ ແລະ ກິລາແຂວງ ອາດຈະເບິ່ງຄວາມຍືນຍົງ ເປັນກິດຈະກຳທີ່ມີການສະໜັບສະໜູນຈາກການນຳ ແຕ່ບໍ່ມີຊັບພະຍາກອນໃນການຈັດຕັ້ງປະຕິບັດ. ເປັນສິ່ງທີ່ສຳຄັນຫຼາຍທີ່ຈະວັດລະດັບຄວາມແຕກຕ່າງຂອງມຸມມອງເພື່ອຊ່ວຍໃຫ້ເຂົ້າໃຈ ແລະ ຄຸ້ມຄອງຄວາມຄາດຫວັງຂອງຜູ້ມີສ່ວນຮ່ວມ ແມ່ນຫຍັງຄວນມີ ແລະ ຫຼົງເຫຼືອໄວ້ພາຍຫຼັງທີ່ແຜນງານໄດ້ສິ້ນສຸດລົງ. ນອກຈາກນີ້, ຂະບວນການດັ່ງງກ່າວແມ່ນໂອກາດເຂົ້າພົວພັນ ແລະ ຊຸກຍູ້ຜູ້ມີສ່ວນຮ່ວມ ຜູ້ທີ່ອາດຈະເປັນຄູ່ຮ່ວມງານໃນການຈັດຕັ້ງປະຕິບັດທີ່ສຳຄັນກໍ່ເປັນໄດ້.

**BEQUAL NGO Consortium Final Evaluation Executive Summary**

# 1. Executive Summary

